ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໕໓/ປພຖຊ/໐໕໐໒໐໙**

# ບົດຄວາມ

## ຕອບໂຕ້ພອນປີໃໝ່ ພສ. 2552

## ຂອງ ປະທານປະເທດ (ຕອນ 3.)

## ພັກຣັດຮັບຮູ້ການຕໍ່ສູ້ ຂອງປະຊາຊົນ

ຜ່ານການຕໍ່ສູ້ອັນຍາວນານ ມາເຖິງ 25 ປີ ຢ່າງບໍ່ໄດ້ລົດລະ ນັບແຕ່ວັນສ້າງຕັ້ງ ພັກແລະກຳລັງທັບເສຣີປະຊາທິປະໄຕລາວ ວັນທີ 1/3/84 ເປັນຕົ້ນມາ. ພວກເຮົາ ໄດ້ເຮັດສຳເຣັດທຸກໆຂັ້ນຕອນຂອງການຕໍ່ສູ້ ຕ້ານອຳນາດຜເດັດການໃນລາວ.

ໃນຊ່ວງ 5 ປີທຳອິດ (1984-1990), ພວກເຮົາ ໄດ້ຄົ້ນຄວ້າແນວທາງການຕໍ່ສູ້ ທີ່ສອດຄ່ອງກັບຄວາມມຸ້ງມາດປາຖນາ ຂອງປະຊາຊົນລາວ, ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ຂອງສາກົນ ແລະສອດຄ່ອງກັບ ຍຸກ ໂລກາວິວັດ ກໍຄືການຕໍ່ສູ້ ແບບສັນຕິວິທີນີ້ເອງ!. ພວກເຮົາ ໄດ້ສຶກສາ ອົບຮົມ ສະມະຊິກແກ່ນສານ ໃຫ້ເຂົ້າໃຈຢ່າງຖືກຕ້ອງເລິກເຊິ່ງ ເຖິງເປົ້າໝາຍ ແລະຂັ້ນຕອນຂອງການຕໍ່ສູ້ ໃນແຕ່ລະລະຍະ ເພື່ອໃຫ້ບັນລຸເປົ້າໝາຍ ຄື: **ສ້າງເງື່ອນໄຂ** ໃຫ້ມີການເຈຣະຈາ ແກ້ໄຂບັນຫາລາວ ທາງການເມືອງ, ໂດຍແນໃສ່ສ້າງຄວາມສາມະຄີປອງດອງຊາດ, ເຮັດໃຫ້ການປະສານງານຮ່ວມ ລະຫວ່າງລາວສອງຝ່າຍ ເກີດມີຂຶ້ນໂດຍໄວ!... ພ້ອມກັນ ຕັດສິນໃຈຜ່ານຜ່າທຸກອຸປສັກນາໆປະການ ເພື່ອແກ້ໄຂບັນຫາລາວ ໃຫ້ລຸລ່ວງໄປດ້ວຍດີ; ເຮັດໃຫ້ໄຊຊະນະໃນການແກ້ໄຂບັນຫາລາວ ຄັ້ງຍິ່ງໃຫຍ່ໃນປະວັດສາດນີ້

**ເປັນໄຊຊະນະລວມ ແລະໝັ້ນຄົງຖາວອນ ຂອງປະຊາຊົນລາວທັງຊາດ.** ພ້ອມດຽວກັນນັ້ນ, ພວກເຮົາກໍໄດ້ສ້າງຄວາມສໍາພັນທະໄມຕຣີ ກັບປະຊາຊົນບັນດາປະເທດເພື່ອນມິດໃນທົ່ວໂລກອີກດ້ວຍ.

ຈາກນັ້ນ, ໃນຊ່ວງປີ 1990-1995 ພວກເຮົາໄດ້ເລັ່ງໃສ່ ນໍານະໂຍບາຍການຕໍ່ສູ້ ແບບສັນຕິວິທີລົງສູ່ພື້ນທີ່ພາຍໃນປະເທດ ໃຫ້ທົ່ວເຖິງ ແລະຖ່ວງທັນກັບສະພາບການ. ພວກເຮົາ ໄດ້ສຶກສາອົບຮົມເຈົ້າໜ້າທີ່ ເສຣີພິທັກສັນຕິຣາດ ໃຫ້ເຂົ້າໃຈຢ່າງຖືກຕ້ອງ ແລະເລິກເຊິ່ງ ໃນການປະຕິບັດ ນະໂຍບາຍແກ້ໄຂບັນຫາລາວຢ່າງສັນຕິ ໃນແຕ່ລະຂັ້ນຕອນຂອງວຽກງານ. ໃຫ້ມີຄວາມສາມາດ ເປັນເຈົ້າການ ນໍາພາປະຊາຊົນເຄື່ອນໄຫວປະຕິບັດງານ ໄດ້ຢ່າງຄ່ອງແຄ້ວ. ໃຫ້ຫລີກເວັ້ນຄວາມເກົ່າເຫລົ່າຄວາມຫລັງ,

ຫລີກເວັ້ນ ການປະທະກັນທາງກໍາລັງ ລະຫວ່າງຄົນລາວດ້ວຍກັນ. ໃຫ້ຍຶດໝັ້ນແນວຄິດຊາດເອກຣາດ ເໜືອກວ່າສິ່ງໃດໆ. ໃຫ້ເຫັນເຖິງຄວາມພັງພິນາດຂອງຊາດແລະປະຊາຊົນ ຖ້າຫາກເມື່ອໃດການແກ້ໄຂບັນຫາລາວ ບໍ່ເປັນໄປຕາມແນວທາງສັນຕິວິທີ. ໃຫ້ທຸກຄົນ ຍຶດໝັ້ນໃນຄໍາຂວັນຍຸທສາດຂອງພັກ ແລະກໍາລັງທັບ ຄື: **ຢາກຊະນະຄອມມິວນິສ ຕ້ອງເຮັດຄື ຄອມມິວນິສ... ແຕ່ຕ້ອງເໜືອກວ່າຄອມມິວນິສ ຈຶ່ງຈະຊະນະຄອມມິວນິສໄດ້.**

ດັ່ງນັ້ນ, ເຈົ້າໜ້າທີ່ສະເພາະກິດ ປະຕິບັດງານຢູ່ພື້ນທີ່ພາຍໃນປະເທດ ກໍນໍາພາປະຊາຊົນ ເຮັດການປະທ້ວງ ແບບສັນຕິວິທີ; ຫວ່ານໃບປິວ, ເປີດໂປງການກະທໍາປ່າເຖື່ອນຂອງພັກຣັດ. ຫ້າມລູກຫລານຂອງຕົນ ບໍ່ໃຫ້ໄປເປັນທະຫານ. ພນັກງານ, ແພດໝໍ ຄຣູ, ອາຈານ ກໍຢຸດເຊົາປະກອບສ່ວນວຽກງານຂອງພັກຣັດ, ໜີໄປຊອກຢູ່ຫາກິນ. ນັກທຸຣະກິດການຄ້າ, ນັກລົງທຶນ, ນາຍທະນາຄານ ກໍຖອນເງິນໂຕນໜີປິດທະນາຄານ, **ປະຕິບັດນະໂຍບາຍ ສ້າງເສຖກິດ ເພື່ອທັບມ້າງເສຖກິດ.** ຊາວນາ, ກັມກອນ ກໍຢຸດຕິການ ໄປເຮັດນາລວມໝູ່ສັງຄົມນິຍົມ. ພຣະສົງສາມເນນ ກໍໃຫ້ກັບເຂົ້າວັດ ປະຕິບັດ ທັມວິນັຍ ຕາມຄໍາສອນ ຂອງພຣະພຸທເຈົ້າ, ບໍ່ແມ່ນໄປເຮັດສວນລ້ຽງໄກ່ຂ້າກິນເອງ ຄືທີ່ພັກຣັດບັງຄັບໃຫ້ເຮັດນັ້ນ. ນັກຮຽນ, ນັກສຶກສາ ກໍຮຽກຮ້ອງໃຫ້ພັກຣັດ ຂຍາຍຫ້ອງຮຽນ ແລະສເນີໃຫ້ປ່ຽນຫລັກສູດ ການຮຽນການສອນ ໃຫ້ໄດ້ມາຕຖານສາກົນ. ຮຽກຮ້ອງ ບໍ່ໃຫ້ປະຊາຊົນ ໄປປ່ອນບັດເລືອກຕັ້ງ ໃນວັນທີ 20 ທັນວາ 1992 ເພື່ອບອກໃຫ້ພັກຣັດຮັບຮູ້ວ່າ ການເລືອກຕັ້ງນັ້ນ, ບໍ່ແມ່ນມາຈາກປະຊາຊົນ ແລະເພື່ອ ຜົນປໂຍດຂອງປະຊາຊົນ.

ຢູ່ຕ່າງປະເທດ, ມີການເດີນຂບວນປະທ້ວງ ຕາມທີ່ຕ່າງໆ... ເປັນຕົ້ນ: ຢູ່ສູນນາໂພ ປະເທດໄທຍກໍຍື່ນສານປະທ້ວງ ຊ້ອງໜ້າເຈົ້າໜ້າທີ່ໄທຍ ໃຫ້ຜູ້ຕາງໜ້າຂ້າຫລວງໃຫຍ່ສະຫະປະຊາຊາດ ປະນາມການກະທໍາ ທີ່ໂຫດຮ້າຍປ່າເຖື່ອນ ຂອງພັກຣັດວຽງຈັນ. ຢູ່ສະຫະຣັດອະເມຣິກາ ໃນຣັດ ຟລໍຣີດາ, ຣັດ ອໍຣີກັນ, ຣັດ ຮາວາຍ. ຢູ່ຣັດ ຄາລີຟໍເນັຽ ໃນເມືອງຫລວງ ສັກຣາເມັນໂຕ ກໍມີອົພຍົບ ຫລາຍກວ່າ 500 ຄົນ ໄດ້ພາກັນຖືປ້າຍປະທ້ວງຊຸມນຸມ ຢູ່ຕໍ່ໜ້າ ຫໍຣັຖສະພາ ກ່າວປະນາມພັກຣັດວຽງຈັນ ຢ່າງເຜັດຮ້ອນ!... ເລີ້ມແຕ່ 9 :30 ຕອນເຊົ້າ ເຖິງ 12 :30 ຕອນແລງຂອງວັນທີ່ 19 ທັນວາ 1992. ຢູ່ປະເທດຝຣັ່ງເສດ, ໃນວັນທີ 20 ທັນວາ 1992 ທີ່ສນາມ ວິກຕໍຣີໂກ ຕໍ່ໜ້າສະຖານທູດລາວກໍມີການປະທ້ວງພັກຣັດຜເດັດການວຽງຈັນ ຢ່າງຮຸນແຮງເໝືອນກັນ.

ໃນຊ່ວງປີ 1995- 2000 ການຕໍ່ສູ້ຂອງປະຊາຊົນ ໄດ້ທະວີຄວາມຮຸນແຮງ ແລະພິດເດືອດ, ປະຊາຊົນ ໄດ້ອອກມາຕອບຕ້ານພັກຣັດ ຢ່າງອອກໜ້າອອກຕາ, ໄດ້ມີປະກົດຂຶ້ນ ຢ່າງເປັນຂບວນ ແຜ່ລາມ ອອກໄປທຸກຫົນທຸກແຫ່ງໃນທົ່ວປະເທດ, ຈາກການກ່າວໂຈມຕີພັກຣັດໃນບັນຫາປາກທ້ອງ..ກໍກ້າວໄປເຖິງ ການບໍ່ປະກອບວຽກງານຂອງພັກຣັດ, ເຮັດໃຫ້ການຂຍາຍຕົວຂອງການຕໍ່ສູ້ ກ້າວໄປຢ່າງໜັກແໜ້ນ.

ພວກເຮົາ, ຈຶ່ງໄດ້ປະກາດເຂດປົກຄອງຕົນເອງທີ 1 ຂຶ້ນ ຢູ່ທາງພາກເໜືອ ຂອງລາວ, ບໍຣິເວນ ຖນົນເລກທີ 4 ບຸ່ນໃຕ້, ແຂວງ ຜົ້ງສາລີ ໃນວັນທີ 9 ມິຖຸນາ 1998. ປະກາດ ເຂດປົກຄອງຕົນເອງທີ 2 ຢູ່ທາງພາກໃຕ້ ພື້ນທີ່ແຂວງ ຈຳປາສັກ, ແຂວງ ເຊກອງແລະແຂວງ ອັຕປື ໃນ ເດືອນ ພຶສພາ 2001 ແລະໄດ້ປະກາດເຂດປົກຄອງຕົນເອງທີ 3 ຂຶ້ນຕື່ມອີກຢູ່ທາງພາກກາງ ໃນ ເຂດພູສ້າງແຮ.

ອີກອັນນຶ່ງ ທີ່ພົ້ນເດັ່ນ, ກໍຄື ໄຊຊນະໃນການປ້ອງບັນຫາລາວ ເຂົ້າສູ້ເວທີສາກົນ ດ້ວຍການສນັບ ສນູນໃຫ້ພັກຣັດວຽງຈັນ ໄດ້ເຂົ້າເປັນສາມະຊິກຂອງສະມາຄົມອາຊຽນ ໃນວັນທີ 23 ກໍຣະກະດາ 1997, ທັງໆທີ່ມີຫລາຍປະເທດ ບໍ່ເຫັນດີນຳ, ຍ້ອນພັກຣັດວຽງຈັນ ຂາດຄຸນສົມບັດ...ຍັງເປັນຜເດັດການນັ້ນເອງ!.

ພວກເຮົາ ເຄີຍໄດ້ສເນີ ໃຫ້ການຊ່ວຍເຫລືອແກ່ພັກຣັດວຽງຈັນ ໃນດ້ານອຸປກອນ, ນັກວິຊາການ ແລະທຶນຮອນ ຫລາຍກວ່າ 67 ລ້ານດອນລາສະຫະຣັດ ເພື່ອ **ພັທນາທາງດ້ານສິດທິ**, ພຽງແຕ່ ໃຫ້ທາງ ສະພາປະຊາຊົນ ແຈ້ງເຈດຈຳນົງມາເຖິງພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຖືວ່າໃຊ້ໄດ້!..ແລະເງິນຊ່ວຍເຫລືອນັ້ນ ກໍບໍ່ຜ່ານ IMF. ເພາະວ່າ ບໍ່ແມ່ນເງິນຂອງຣັຖບານໃດ ຣັຖບານນຶ່ງ, ແຕ່ເປັນເງິນຂອງປະຊາຊົນບັນດາປະເທດເພື່ອນມິຕໃນທົ່ວໂລກ ທີ່ຢາກເຫັນລາວສອງຝ່າຍ ຫັນໜ້າເຂົ້າມາ ແກ້ໄຂບັນຫາຊາດຮ່ວມກັນ ຕາມແນວທາງສັນຕິວິທີ, ນຳເອົາເສຣີພາບອັນແທ້ຈິງ ແລະ ສັນຕິສຸຂ ອັນຍາວນານ ມາສູ່ປະເທດຊາດບ້ານເມືອງ.

ການຕໍ່ສູ້ໃນຊ່ວງປີ 2000-2005 ໄດ້ສືບຕໍ່ຢ່າງເປັນຂບວນໜັກແໜ້ນ, ຍ້ອນ ປະຊາຊົນລາວ ທັງ ໃນແລະນອກປະເທດ ໄດ້ເປັນເຈົ້າການ ອອກມາຕໍ່ສູ້ໃນທຸກຮູບແບບ ຕາມເງື່ອນໄຂແລະພາຫະນະ ທີ່ ພວກເຂົາ ຫາມາໄດ້. ບາງບ່ອນ, ກໍມີການປະທະກັນທາງກຳລັງອາວຸທເກີດຂຶ້ນ, ແຕ່ພັກຣັດ ບໍ່ຍອມຮັບຮູ້ ຄວາມເປັນຈິງຈັກເທື່ອ!. ເຖິງແມ່ນວ່າ ມີຣະເບີດແຕກຂຶ້ນ ຢູ່ຕາມ ຕົວເມືອງວຽງຈັນແລະຕົວເມືອງ ໃຫຍ່ຕ່າງໆ... ພັກຣັດ ກໍບອກວ່າ "**ແມ່ນສຽງກະໂພກແຕກ**"; ມີຣົຖຖືກຍິງຕົກຕະຄອງ, ມີຣົຖຊົນສິ່ງຂອງ ພັກຣັດ, ມີຣົຖແກ່ໄມ້ ຖືກເຜົາ...ໆ ພັກຣັດກໍບອກວ່າ "**ເກີດມາຈາກຄົນຂັບຣົຖ ເມົາເຫລົ້າ**"... ຕ້ອງເຂັ້ມງວດຂຶ້ນຕື່ມ; ແມ່ນກະທັ່ງກໍຣະນີ ວັງເຕົ່າ ໃນວັນທີ່ 3 ກໍຣະກະດາ 2000 ປະຊາຊົນ ລຸກຂຶ້ນມາຕໍ່ສູ້...ຈົນເກີດມີການປະທະກັນທາງກຳລັງອາວຸດ, ມີຜູ້ບາດເຈັບລົ້ມຕາຍ...ໆ ພັກຣັດກໍອອກມາ ໃຫ້ສຳພາດ ວ່າ " **ບໍ່ມີເຫດການໃດໆເກີດຂຶ້ນ, ທຸກຢ່າງ ມີຄວາມສງົບດີ**"; ແຕ່ເມື່ອປົກປິດບໍ່ໄດ້, ກໍ ອອກມາກ່າວ ໃສ່ຮ້າຍປ້າຍສີວ່າ "**ແມ່ນພວກໂຈນ!**".

ໃນເດືອນທັນວາ ປີ 2005 ກໍມີການປິດເສັ້ນທາງ ເລກທີ 13,9,8 ໃນກຳນົດ 30 ວັນ ເພື່ອ ຮຽກຮ້ອງໃຫ້ ພັກຣັດ ອອກມາໂອ້ລົມກັບພວກເຮົາ ປະຊາຊົນພັກແລະກຳລັງທັບ ເສຣີປະຊາທິປະໄຕລາວ,

ພວກເຮົາ ໄດ້ແຈ້ງໄປຍັງສະຖານທູດຕ່າງໆ ໃນລາວແລະຜູ້ທີ່ຈະເຂົ້າມາໃນລາວ ເພາະບໍ່ມີ ຄວາມປອດພັຍ; ແລະຫລາຍປະເທດ ກໍຕັກເຕືອນປະຊາຊົນແລະນັກທຸຣະກິດຂອງພວກເຂົາ ທີ່ຈະເຂົ້າມາລົງທຶນໃນລາວ ໃຫ້ຣະມັດຣະວັງ, ຊຶ່ງມັນເຮັດໃຫ້ພັກຣັດ ເປັນເດືອດເປັນຮ້ອນ! ທ່ານ ຍົງ ຈັນທະລັງສີ ໂຄສົກ ກະຊວງການຕ່າງປະເທດ ໄດ້ອອກມາປະຕິເສດ ທາງຂ່າວສານລາວ ແລະຕ່າງປະເທດ, ທາງວິທະຍຸ, ທາງໂທຣະທັດ ແລະໜັງສືພິມຕ່າງໆ ເພື່ອຢືນຢັນວ່າ **"ບໍ່ມີກຸ່ມຕໍ່ຕ້ານຣັຖບານ"**, ທຸກພື້ນທີ່ໃນປະເທດ ມີຄວາມປອດພັຍ ເຖິງ 100% ຊຶ່ງມັນຕຣົງກັນຂ້າມ ກັບຄວາມອວຍພອນປີໃໝ່ ພສ.2552 ຂອງທ່ານຈູມມະລີ ໄຊຍະສອນ ປະທານປະເທດ ທີ່ຮຽກຮ້ອງ ໃຫ້ທົ່ວປວງຊົນ **ສກັດກັ້ນ ການຫັນປ່ຽນໂດຍສັນຕິ ຂອງພວກອິດທິກຳລັງ ປໍຣະປັກ ທີ່ຫວັງມ້າງເພຣະບອບໃໝ່ຂອງພວກເຮົາ. ອັນນີ້, ກໍ ໝາຍຄວາມວ່າ ພັກຣັດ ໄດ້ຍອມຮັບຮູ້ ການຕໍ່ສູ້ ຂອງປະຊາຊົນຢ່າງສິ້ນເຊີງ!.....**

ບົນຈິດໃຈຮັກຊາດເພງເຊື້ອ, ຮັກບ້ານເກີດເມືອງນອນ ຢ່າງເລິກເຊິ່ງທີ່ສຸດ, ພວກເຮົາ ປະຊາຊົນ ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ຮຽກຮ້ອງມາຍັງພັກຣັດ ສປປລາວ. ຈິ່ງໄດ້ອອກມາໂອ້ລົມ ກັບພວກເຮົາ... ເພື່ອພ້ອມກັນນຳພາຊາດ ອອກຈາກຄວາມຫາຍຍະນະ ທັງຫລາຍທັງປວງ. ພວກເຮົາ ບໍ່ຄວນຈະ ປ່ອຍປະ ໃຫ້ປະເທດຊາດຂອງພວກເຮົາ ໄດ້ສູນເສັຽໄປຫລາຍກວ່ານີ້ຕື່ມອີກ ກ່ອນທີ່ຈະໝົດ ໂອກາດ. **ເຖິງແມ່ນວ່າພວກເຮົາ ຈະປິ່ນຫລັງໃສ່ກັນ...ຍ່າງໄປຄົນລະທາງ, ແຕ່ຖ້າພວກເຮົາ ຫາກຍ່າງ ຢູ່ໃນເສັ້ນຂນານອັນດຽວກັນ... ແນ່ນອນວ່າ "ພວກເຮົາ ກໍສາມາດ ຍ່າງເຂົ້າມາຢືນຢູ່ຕໍ່ໜ້າກັນໄດ້ ແລະ ໂອ້ລົມກັນໄດ້ ເພາະໂລກນີ້ ມັນກົມ!.**

*(ເຊີນຕິດຕາມ ຕອນຕໍ່ໄປ.)*

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໖ ພຶສພາ ໒໐໐໙**